ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

+++++++++++++

ກະຊວງການຄ້າ ແລະ ທ່ອງທ່ຽວ

ເລກທີ 0807 /ກຄທ
2/9/99

# ຂໍ້ກຳນົດ

## ວ່າດ້ວຍການຈັດຕັ້ງ ແລະ ການຄຸ້ມຄອງ ຕະຫລາດຊາຍແດນລາວ - ຫວຽດນາມ

- ອີງໃສ່ ລະບຽບການ, ຂໍ້ກຳນົດ, ກົດໝາຍທີ່ກ່ຽວຂ້ອງ ສ ປ ປ ລາວ;
- ອີງໃສ່ ສັນຍາການຮ່ວມມືທາງດ້ານເສດຖະກິດ, ວັດທະນາທຳ, ວິທະຍາສາດເຕັກນິກ ແລະ ສັນຍາການຄ້າ ລະຫວ່າງ ກະຊວງການຄ້າ ແລະ ທ່ອງທ່ຽວ ສ ປ ປ ລາວ ແລະ ກະຊວງການຄ້າ ສ ສ ຫວຽດນາມ ທີ່ໄດ້ເຊັນກັນໃນເດືອນ 3 / 98;
- ອີງໃສ່ ດຳລັດ ເລກທີ 24 / ນຍ, ລົງວັນທີ 24 / 03/ 99 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການຄ້າ ແລະ ທ່ອງທ່ຽວ.

ລັດຖະມົນຕີ ວ່າການກະຊວງການຄ້າ ແລະ ທ່ອງທ່ຽວ ອອກຂໍ້ກຳນົດ :

## ໝວດທີ I
## ຂໍ້ກຳນົດທົ່ວໄປ

**ມາດຕາ 01.** ວັດຖຸປະສົງ.

ຂໍ້ກຳນົດສະບັບນີ້ ກຳນົດລະບຽບການກ່ຽວກັບການຈັດຕັ້ງ ແລະການຄຸ້ມຄອງຕະຫລາດຊາຍແດນ ລາວ - ຫວຽດນາມ ແນໃສ່ເປີດເສີດໃຫ້ການຈໍລະຈອນສິນຄ້າ ຕາມແນວຊາຍແດນເຄື່ອນໄຫວເປັນລະບົບ, ລະບຽບ, ສົ່ງເສີມການຜະລິດ, ປະກອບສ່ວນເຂົ້າໃນການຂະຫຍາຍເສດຖະກິດ ແລະ ການພົວພັນມິດຕະພາບທີ່ແໜ້ນ ລະຫວ່າງປະຊາຊົນສອງປະເທດ ລາວ -ຫວຽດນາມ ໃຫ້ນັບມື້ນັບເຕີບໃຫຍ່ເຂັ້ມແຂງຍິ່ງຂຶ້ນ.

**ມາດຕາ 02.** ຕະຫລາດຊາຍແດນ.

ຕະຫລາດຊາຍແດນແມ່ນຂອບເຂດພື້ນທີ່ ທີ່ໄດ້ຮັບອະນຸຍາດໃຫ້ຈັດຕັ້ງຕະຫລາດຊາຍແດນ ເພື່ອດຳເນີນທຸລະກິດ ຊື້ - ຂາຍ, ແລກປ່ຽນສິນຄ້າລະຫວ່າງປະຊາຊົນ ແລະ ບັນດາຫົວໜ່ວຍທຸລະກິດທີ່ກ່ຽວຂ້ອງ ຂອງສອງປະເທດ ລາວ - ຫວຽດນາມ. ອົງການຈັດຕັ້ງທີ່ມີສິດອະນຸຍາດໃຫ້ຈັດຕັ້ງຕະຫລາດຊາຍແດນ ແມ່ນອົງການຈັດຕັ້ງທີ່ໄດ້ຮັບມອບໝາຍຕາມຂໍ້ກຳນົດ ສະບັບນີ້.

ຂອບເຂດຕະຫລາດຊາຍແດນ ອາດຈະກວມເອົາຂອບເຂດໃດໜຶ່ງຂອງບ້ານ ຫລື ຂອບເຂດພື້ນທີ່ ທີ່ເໝາະສົມໃດໜຶ່ງ ທີ່ອະນຸຍາດໃຫ້ຕາມເງື່ອນໄຂຂອງແຕ່ລະບ່ອນ.

**ມາດຕາ 03.** ຂອບເຂດດັດສົມຂອງຂໍ້ກຳນົດ.

ຂໍ້ກຳນົດສະບັບນີ້ ນຳໃຊ້ໄດ້ສະເພາະແຕ່ຂອບເຂດບັນດາຕະຫລາດຊາຍແດນ ຂອງລາວທີ່ມີພື້ນທີ່ຕິດຈອດກັບຊາຍແດນ ສ ສ ຫວຽດນາມ ເທົ່ານັ້ນ.

## ໝວດທີ II
## ເງື່ອນໄຂ ແລະ ລະບຽບການຂອງການເຄື່ອນໄຫວ ໃນຕະຫຼາດຊາຍແດນ.

ມາດຕາ 04. ຫຼັກການພື້ນຖານຂອງການເຄື່ອນໄຫວ.

ທຸກການເຄື່ອນໄຫວໃນຕະຫຼາດຊາຍແດນ ລາວ - ຫວຽດນາມ ຈະຕ້ອງສອດຄ່ອງກັບບັນດາລະບຽບການ, ຂໍ້ກຳນົດ, ກົດໝາຍຕ່າງໆທີ່ກ່ຽວຂ້ອງ ຂອງ ສ ປ ປ ລາວ ພ້ອມທັງເງື່ອນໄຂ ຂອງຂໍ້ກຳນົດສະບັບນີ້ ແລະ ນິຕິກຳທີ່ກ່ຽວຂ້ອງກັບການຈັດຕັ້ງ, ການຄຸ້ມຄອງ ແລະ ການເຄື່ອນໄຫວຂອງ ສ ສ ຫວຽດນາມ ກ່ຽວກັບຕະຫຼາດຊາຍແດນ ຫວຽດນາມ - ລາວ.

ມາດຕາ 05. ເງື່ອນໄຂສຳລັບຄົນລາວ.

ຜູ້ທີ່ສາມາດເຂົ້າໄປດຳເນີນທຸລະກິດ ຊື້-ຂາຍ, ແລກປ່ຽນສິນຄ້າໃນຕະຫຼາດຊາຍແດນ ລາວ - ຫວຽດນາມ ( ສຳລັບຄົນລາວ ) ປະກອບດ້ວຍ : ປະຊາຊົນລາວ ທີ່ອາໃສຢູ່ໃນຂອບເຂດຊາຍແດນ ແລະບັນດາຫົວໜ່ວຍທຸລະກິດ ບຸກຄົນ ຫລື ນິຕິບຸກຄົນໃນນີ້ ສຳລັບບັນດາຫົວໜ່ວຍທຸລະກິດຈະຕ້ອງ :

- ມີທະບຽນວິສາຫະກິດ ການຄ້າຂາອອກ-ຂາເຂົ້າ,ການຄ້າຂາຍສົ່ງ,ການຄ້າຂາຍຍ່ອຍ ຫຼື ທະບຽນວິສາຫະກິດດ້ານອື່ນໆທີ່ກ່ຽວຂ້ອງກັບທຸລະກິດ ທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວໃນຕະຫຼາດຊາຍແດນແຕ່ລະບ່ອນ;
- ໄດ້ຜ່ານການອະນຸຍາດຈາກຫ້ອງການ ການຄ້າເມືອງ ແລະໄດ້ຮັບການຈັດສັນສະຖານທີ່ ໃຫ້ຈາກຄະນະຄຸ້ມຄອງຕະຫຼາດຊາຍແດນທີ່ກ່ຽວຂ້ອງ ໃນແຕ່ລະບ່ອນ.

ໃຫ້ພະແນກການຄ້າແຂວງ ປະສານກັບອຳນາດການປົກຄອງທ້ອງຖິ່ນ ແຂວງ, ເມືອງ, ແລະ ຂະແໜງການທີ່ກ່ຽວຂ້ອງ ເປັນກຳນົດວ່າ : " ປະຊາຊົນລາວ ທີ່ອາໃສຢູ່ໃນຂອບເຂດຊາຍແດນ " ປະກອບດ້ວຍປະຊາຊົນໃນຂອບເຂດພື້ນທີ່ໃດ ໃນທ້ອງຖິ່ນຂອງຕົນໂດຍໃຫ້ອີງໃສ່ສະພາບຄວາມເປັນຈິງຂອງແຕ່ລະບ່ອນ.

ມາດຕາ 06. ເງື່ອນໄຂສຳລັບຄົນຫວຽດນາມ.

ຜູ້ທີ່ສາມາດເຂົ້າໄປເຄື່ອນໄຫວດຳເນີນທຸລະກິດຊື້-ຂາຍ, ແລກປ່ຽນສິນຄ້າໃນຕະຫຼາດຊາຍແດນລາວ - ຫວຽດນາມ ( ສຳລັບຄົນຫວຽດນາມ ) ປະກອບດ້ວຍ : ປະຊາຊົນຫວຽດນາມ ທີ່ອາໃສຢູ່ໃນຂອບເຂດຊາຍແດນ ແລະ ບັນດາຫົວໜ່ວຍທຸລະກິດ ບຸກຄົນ ຫລື ນິຕິບຸກຄົນໃນນີ້ ສຳລັບບັນດາຫົວໜ່ວຍທຸລະກິດ ຈະຕ້ອງ :

- ຂໍອະນຸຍາດດຳເນີນທຸລະກິດ ປົກກະຕິໃນຕະຫຼາດຊາຍແດນລາວ-ຫວຽດນາມ ຕາມແບບຟອມ ໃບຄຳຮ້ອງ ທີ່ກຳນົດໄວ້ພ້ອມທັງຄຳໝັ້ນສັນຍາວ່າ: ຈະປະຕິບັດຕາມຂໍ້ກຳນົດ ກ່ຽວກັບຕະຫຼາດຊາຍແດນສະບັບນີ້ ແລະບັນດາລະບຽບ, ກົດໝາຍທີ່ກ່ຽວຂ້ອງອື່ນໆ ຂອງ ສ ປ ປ ລາວ ແລະ ສ ສ ຫວຽດນາມ.ຄຳວ່າດຳເນີນທຸລະກິດປົກກະຕິ ໝາຍເຖິງການອະນຸຍາດ ໃຫ້ຫົວໜ່ວຍທຸລະກິດ ມີຮ້ານຄ້າຂາຍສິນຄ້າ ຕັ້ງປີເປັນຕົ້ນ;
- ໄດ້ຮັບການຢັ້ງຢືນຈາກ ອຳນາດການປົກຄອງທ້ອງຖິ່ນ ຂອງຫວຽດນາມ;
- ໄດ້ຮັບການອະນຸຍາດຈາກຫ້ອງການ ການຄ້າເມືອງ ແລະໄດ້ຮັບການຈັດສັນສະຖານທີ່ໃຫ້ດຳເນີນທຸລະກິດ ໂດຍຄະນະຄຸ້ມຄອງຕະຫຼາດຊາຍແດນ ຂອງລາວ.

ມາດຕາ 07. ສິດ ແລະ ໜ້າທີ່ຂອງຜູ້ຄ້າ - ຂາຍ ໃນຕະຫລາດ.

ຜູ້ຄ້າຂາຍ, ຫົວໜ່ວຍທຸລະກິດ ບຸກຄົນ ຫລື ນິຕິບຸກຄົນທີ່ເຄື່ອນໄຫວທຸລະກິດຊື້ - ຂາຍ, ແລກປ່ຽນສິນຄ້າໃນຂອບເຂດຕະຫລາດຊາຍແດນ ຕາມທີ່ໄດ້ກ່າວມາໃນມາດຕາ 05 ແລະ 06 ຂໍ້ກຳນົດ ສະບັບນີ້ ມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້ :

- ໄດ້ຮັບການປົກປ້ອງສິດຄ້າ-ຂາຍ ທີ່ຖືກຕ້ອງຕາມກົດໝາຍຢ່າງເຕັມສ່ວນ;
- ໄດ້ຮັບການຊ່ວຍເຫລືອ, ແນະນຳດ້ານການເຄື່ອນໄຫວທຸລະກິດຄ້າ-ຂາຍຢູ່ຕະຫລາດ;
- ມີສິດໃນການຮ້ອງຂໍໃຫ້ຄະນະຄຸ້ມຄອງຕະຫລາດ ແລະ ບັນດາອົງການລັດທີ່ມີຂອບ ທີ່ກ່ຽວຂ້ອງ ເພື່ອແກ້ໄຂບັນດາບັນຫາທີ່ເກີດຂື້ນກັບຕົນ;
- ມີໜ້າທີ່ໃນການປະຕິບັດ ບັນດາລະບອບລະບຽບ, ຂໍ້ກຳນົດກົດໝາຍຕ່າງໆທີ່ກ່ຽວຂ້ອງ ລວມທັງຂໍ້ກຳນົດສະບັບນີ້ , ໃນນີ້ຕົ້ນຕໍແມ່ນໜ້າທີ່ໃນການປະຕິບັດພັນທະພາສີ , ອາກອນຕ່າງໆ;
- ມີໜ້າທີ່ຮັກສາຄວາມສະອາດ,ຮັບປະກັນຄວາມສະຫງົບ ແລະລະບຽບການຄຸ້ມຄອງອື່ນໆ ຂອງຄະນະຄຸ້ມຄອງຕະຫລາດວາງອອກ.

ມາດຕາ 08. ປະເພດສິນຄ້າທີ່ອະນຸຍາດໃຫ້ຊື້-ຂາຍ.

ສິນຄ້າທີ່ອະນຸຍາດໃຫ້ ຊື້ - ຂາຍ ໃນຕະຫລາດຊາຍແດນລາວ - ຫວຽດນາມ ປະກອບດ້ວຍສິນຄ້າທຸກປະເພດທີ່ອະນຸຍາດໃຫ້ຈໍລະຈອນ ຈຳໜ່າຍໃນທ້ອງຕະຫລາດພາຍໃນຂອງລາວ ເວັ້ນເສັຍແຕ່ບາງປະເພດສິນຄ້າ ທີ່ລະບຽບກົດໝາຍ ຂອງລາວກຳນົດໄວ້ເປັນຢ່າງອື່ນ. ລັດຖະບານແຫ່ງ ສ ປ ປ ລາວ ສົ່ງເສີມການຊື້- ຂາຍແລກປ່ຽນຂອງປະຊາຊົນສອງປະເທດໃນເຂດຊາຍແດນ ຕໍ່ບັນດາປະເພດສິນຄ້າຕ່າງໆທີ່ສາມາດຜະລິດໄດ້ຢູ່ທ້ອງຖິ່ນຂອງລາວ ແລະ ຫວຽດນາມ ດ້ວຍຮູບການ ແລະ ມາດຕະການກະຕຸກຊຸກຍູ້ຕ່າງໆ ໃນແຕ່ລະໄລຍະ.

ມາດຕາ 09. ສະກຸນເງິນທີ່ອະນຸຍາດໃຫ້ນຳໃຊ້.

ທຸກການຊຳລະສະສາງຊື້ - ຂາຍ ໃນຂອບເຂດຕະຫລາດຊາຍແດນລາວ - ຫວຽດນາມ ຕ້ອງປະຕິບັດບົນພື້ນຖານເງິນກີບຂອງລາວ ແລະ ເງິນດົ່ງຂອງຫວຽດນາມເທົ່ານັ້ນ.

ມາດຕາ 10. ການເສັຍພາສີສຳລັບປະຊາຊົນລາວ ແລະ ປະຊາຊົນຫວຽດນາມ.

ການນຳສິນຄ້າທີ່ເປັນຜະລິດຕະພັນພາຍໃນຂອງລາວ ຫລື ຫວຽດນາມທີ່ຈຳເປັນຕໍ່ຊີວິດປະຈຳວັນຂອງປະຊາຊົນ ເຂົ້າ ຊື້ - ຂາຍ, ແລກປ່ຽນສິນຄ້າຢູ່ຕະຫລາດຊາຍແດນລາວ - ຫວຽດນາມ ຜ່ານດ່ານຊາຍແດນ ຊຶ່ງມີມູນຄ່າບໍ່ເກີນ 300.000 ກີບ ຕໍ່ຄົນ / ຕໍ່ວັນ ແມ່ນຈະໄດ້ຮັບການຍົກເວັ້ນພາສີ,ໃນກໍລະນີມູນຄ່າວັດແທກເປັນຫົວໜ່ວຍຂອງສິນຄ້າໃດໜຶ່ງ ທີ່ເປັນຜະລິດຕະພັນດ້ານກະສິກຳ ຫລື ຫັດຖະກຳ ຫລື ເຄື່ອງປ່າຂອງດົງບໍ່ອາດພັດແຍກກັນໄດ້ທາງກາຍຍະພາບ ແຕ່ມີມູນຄ່າເກີນກວ່າ 300.000 ກີບ ( ເຊັ່ນ: ສັດ 1 ໂຕ, ວັດຖຸ 1 ອັນ ) ກໍຈະໄດ້ຮັບການຍົກເວັ້ນພາສີ ເຊັ່ນດຽວກັນ . ມູນຄ່າກຳນົດຕາມທີ່ກ່າວມານີ້ ຈະໄດ້ຮັບການປັບປຸງ , ດັດແປງຕາມເງື່ອນໄຂສະພາບຄວາມເປັນຈິງໃນແຕ່ລະໄລຍະ.

ການນຳສິນຄ້າເຂົ້າ - ອອກ ຕະຫລາດຊາຍແດນ ນອກຈາກເງື່ອນໄຂທີ່ກ່າວມາທັງເທິງນີ້, ມູນຄ່າທີ່ເກີນ 300.000 ກີບ ຈະຕ້ອງໄດ້ເສັຍພາສີ ຂາເຂົ້າ - ຂາອອກທັງໝົດຕາມລະບຽບ, ກົດໝາຍທີ່ກ່ຽວຂ້ອງ.

ບັນດາປະເພດສິນຄ້າທີ່ເປັນຜະລິດຕະພັນ ຂອງປະເທດທີ 3 ທີ່ນຳມາຈໍລະຈອນຊື້-ຂາຍ

- ໃນຕະຫລາດຊາຍແດນລາວ - ຫວຽດນາມ ຈະຕ້ອງໄດ້ເສັຍພາສີຂາເຂົ້າ -ຂາອອກ ຕາມລະບຽບ ກົດໝາຍ ຂອງ ສ ປ ປ ລາວ.

ມາດຕາ 11. ການເສັຍພາສີ-ອາກອນ ສຳລັບຫົວໜ່ວຍທຸລະກິດ ລາວ ແລະ ຫວຽດນາມ.

ບັນດາຫົວໜ່ວຍທຸລະກິດ ບຸກຄົນ ຫຼື ນິຕິບຸກຄົນຂອງລາວ ແລະ ຫວຽດນາມ ທີ່ໄດ້ຮັບອະນຸຍາດໃຫ້ຄ້າເປັນທຸລະກິດ ໃນຂອບເຂດຕະຫລາດຊາຍແດນລາວ -ຫວຽດນາມ ຫຼື ຕະຫລາດຊາຍແດນຫວຽດນາມ - ລາວ ຈະຕ້ອງໄດ້ເສັຍພາສີ-ອາກອນ ຕາມລະບຽບກົດໝາຍຂອງສອງປະເທດ.

## ໝວດທີ III
## ການຈັດຕັ້ງ ແລະ ການຄຸ້ມຄອງຕະຫລາດຊາຍແດນ

ມາດຕາ 12. ການຈັດຕັ້ງຕະຫລາດຊາຍແດນ.

ຕະຫລາດຊາຍແດນ ຈະຖືກສ້າງຕັ້ງ ຫລື ຍຸບເລີກ ໄດ້ກໍຕໍ່ເມື່ອໄດ້ຮັບການອະນຸມັດ, ໂດຍລົງເຫັນດີຈາກເຈົ້າແຂວງບົນພື້ນຖານການສະເໜີຂອງ ເຈົ້າເມືອງ ແລະ ຫົວໜ້າພະແນກການຄ້າແຂວງ ຕາມເງື່ອນໄຂ, ສະພາບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ.

ພາຍຫລັງໄດ້ຮັບອະນຸຍາດສ້າງຕັ້ງແລ້ວ ພະແນກການຄ້າແຂວງ ຕ້ອງເປັນເຈົ້າການໃນການປະສານກັບ ພະແນກການເງິນແຂວງ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ ເພື່ອຊ່ວຍເຈົ້າເມືອງ ໃນເມືອງທີ່ກ່ຽວຂ້ອງໃນການຈັດຕັ້ງ, ຄຸ້ມຄອງຕະຫລາດໃຫ້ເຄື່ອນໄຫວສອດຄ່ອງກັບລະບຽບກົດໝາຍທີ່ກຳນົດໄວ້ ແລະ ມີປະສິດທິຜົນ.

ມາດຕາ 13. ຄະນະຄຸ້ມຄອງຕະຫລາດຊາຍແດນ.

ອົງການຄຸ້ມຄອງ, ບໍລິຫານຕະຫລາດຊາຍແດນ ມີຊື່ຕໍ່ໄປເອີ້ນຫຍໍ້ວ່າ : " ຄະນະຄຸ້ມຄອງຕະຫລາດຊາຍແດນ " ຖືກແຕ່ງຕັ້ງໂດຍເຈົ້າແຂວງບົນພື້ນຖານການສະເໜີຂອງເຈົ້າເມືອງ ແລະ ຫົວໜ້າພະແນກການຄ້າແຂວງ.

ມອບໃຫ້ພະແນກການຄ້າແຂວງ ປະສານກັບພະແນກການເງິນ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງຄົ້ນຄວ້າກ່ຽວກັບສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບລະອຽດ ຂອງຄະນະຄຸ້ມຄອງຕະຫລາດຊາຍແດນ ລວມທັງລະບຽບການຄຸ້ມຄອງລະອຽດຢູ່ໃນແຕ່ລະຕະຫລາດ ເພື່ອສະເໜີເຈົ້າແຂວງອະນຸມັດປະກາດໃຊ້ ຕາມເງື່ອນໄຂຂອງແຕ່ລະບ່ອນ.

ລະບຽບການຄຸ້ມຄອງລະອຽດຂອງຕະຫລາດຊາຍແດນ ກ່ອນຈະສະເໜີອະນຸມັດປະກາດໃຊ້ ນຳເຈົ້າແຂວງ ຕ້ອງປະສານສົມທົບເປັນເອກະພາບ ກັບພາກສ່ວນທີ່ກ່ຽວຂ້ອງ ຂອງຝ່າຍຫວຽດນາມກ່ອນ. ພາຍຫລັງການປະກາດໃຊ້ຕ້ອງແຈ້ງເປັນພາສາລາວ ແລະ ຫວຽດນາມ ເພື່ອໃຫ້ຜູ້ກ່ຽວຂ້ອງໃນຕະຫລາດຊາຍແດນໄດ້ຮັບຊາບ ແລະ ປະຕິບັດຢ່າງທົ່ວເຖິງ.

## ໝວດທີ IV
## ຂໍ້ກຳນົດສຸດທ້າຍ

ມາດຕາ 14. ການຈັດຕັ້ງປະຕິບັດ.

ມອບໃຫ້ພະແນກການຄ້າ ຂອງບັນດາແຂວງທີ່ມີຊາຍແດນຕິດຈອດກັບ ສ ສ ຫວຽດ

ນາມ ຈັດຕັ້ງປະຕິບັດດັ່ງນີ້ :

- ປະສານກັບອຳນາດການປົກຄອງທ້ອງຖິ່ນ ແລະ ພະແນກການທີ່ກ່ຽວຂ້ອງ ໂດຍສະເພາະພະແນກການເງິນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງກັບດ່ານຊາຍແດນ ເພື່ອກຳນົດສະຖານທີ່ຕະຫລາດຊາຍແດນ ທີ່ຈະເປີດໃນແຕ່ລະໄລຍະ ເພື່ອແຈ້ງໃຫ້ອຳນາດການປົກຄອງທ້ອງຖິ່ນ , ທີ່ກ່ຽວຂ້ອງຂອງຝ່າຍຫວຽດນາມ ຊາບ ແລະ ຮ່ວມມືປະສານສົມທົບໃນການຈັດຕັ້ງຄຸ້ມຄອງຕະຫລາດຊາຍແດນ ລາວ - ຫວຽດນາມ,ຫວຽດນາມ - ລາວ ໃຫ້ເປັນເອກະພາບ ແລະ ມີຜົນໃນທາງປະຕິບັດເປັນຢ່າງດີ;

-ເປັນເຈົ້າການໃນການປະສານກັບພະແນກການເງິນແຂວງ ເພື່ອເອກະພາບກັນໃນການຊີ້ນຳ , ນຳພາການຈັດຕັ້ງປະຕິບັດລະບຽບຢູ່ໃນຕະຫລາດຊາຍແດນ ຕໍ່ຫ້ອງການ ການຄ້າເມືອງ, ຫ້ອງການ ການເງິນເມືອງ ແລະຄະນະຄຸ້ມຄອງຕະຫລາດໃນວຽກງານທີ່ກ່ຽວກັບການຄຸ້ມຄອງການເຄື່ອນໄຫວດຳເນີນທຸລະກິດຊື້-ຂາຍ,ລະບຽບການເສຍພາສີ,ອາກອນ ຫຼື ຍົກເວັ້ນພາສີ,ການອະນຸຍາດດຳເນີນທຸລະກິດໃນຕະຫລາດຊາຍແດນ , ການປະກອບເອກະສານ ຫລື ຂໍ້ມູນເຂົ້າໃນຟອມເອກະສານ ຫລື ຕາຕະລາງຕ່າງໆທີ່ກຳນົດອອກ,ໃນນີ້ຕົ້ນຕໍແມ່ນບັນດາ ( ເອກະສານຊ້ອນທ້າຍ : ກ, ຂ, ຄ ແລະ ງ ) ຄັດຕິດມາພ້ອມນີ້;

- ລາຍງານສະພາບຕະຫລາດ, ຂໍ້ມູນກ່ຽວກັບການຊື້ - ຂາຍ ຂອງຕະຫລາດຊາຍແດນໃຫ້ກະຊວງການຄ້າ ແລະ ເຈົ້າແຂວງຢ່າງເປັນປະຈຳທຸກໆ 3 ເດືອນ.

ມາດຕາ 16. ຜົນສັກສິດ.

ຂໍ້ກຳນົດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ,ວັນທີ 0 2 SEP 1999

ລັດຖະມົນຕີ ວ່າການກະຊວງການຄ້າ ແລະ ທ່ອງທ່ຽວ.

ພູມີ ທິບພະວອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-------x x x-------

( ເອກະສານຊ້ອນທ້າຍ: 11 )

# ໃບຄຳຮ້ອງ

ຂໍອະນຸຍາດ ເຂົ້າເປັນທຸລະກິດ ຊື້ - ຂາຍ
ໃນຕະຫລາດຊາຍແດນ (ຊື່ຕະຫລາດຂອງລາວ )

*ຮຽນ:* ທ່ານ ເຈົ້າເມືອງ ເມືອງ ( ຊື່ເມືອງຊາຍແດນລາວ )

1. ຂ້າພະເຈົ້າ ຊື່ :..............................ນາມສະກຸນ..............................ອາຍຸ..............
   ສັນຊາດ ຫລື ຊື່ ຫົວໜ່ວຍທຸລະກິດບຸກຄົນ ຫລື ນິຕິບຸກຄົນ ..............................
   ..............................ສັນຊາດ ..............................
2. ທີ່ຢູ່ ( ຫລື ທີ່ຕັ້ງ ສຳນັກງານໃຫຍ່ ຢູ່ ທາງຣະບານ ):..............................
- ທະບຽນສຳມະໂນຄົວ :..............................
- ເບີໂທລະສັບ ຫລື Telex ຫລື Fax :..............................
3. ມີບັນຊີ ເລກທີ :..............................ຢູ່ທະນາຄານ :..............................
4. ທຶນທີ່ຈະປະກອບ ທຸລະກິດ ໃນຕະຫລາດ :..............................ໃນນີ້: ທຶນໝູນວຽນ
   ..............................
5. ຂໍອະນຸຍາດ ເຂົ້າເປັນທຸລະກິດຊື້ - ຂາຍ ຢູ່ຕະຫລາດຊາຍແດນ ( ຊື່ ຕະຫລາດຊາຍແດນລາວ ) ໃນ ປະເພດສິນຄ້າ ( ຊື່ ສິນຄ້າ )..............................
   ..............................
6. ດ່ານຊາຍແດນ ທີ່ຈະຂໍອະນຸຍາດ ນຳສິນຄ້າ ເຂົ້າ - ອອກ ( ຊື່ດ່ານ ).
7. ພາຍຫລັງໄດ້ຮັບອະນຸຍາດແລ້ວ ຂ້າພະເຈົ້າຈະປະຕິບັດຢ່າງເຂັ້ມງວດ ບັນດາລະບຽບຫລັກການບົດກົດໝາຍຕ່າງໆ ທີ່ກ່ຽວຂ້ອງ ຂອງ ສ ປ ປ ລາວ ໃນກໍລະນີລະເມີດລະບຽບກົດໝາຍ ຫລື ບິດເບືອນ ຂໍ້ຄວາມທີ່ກ່າວໃນ ໃບຄຳຮ້ອງສະບັບນີ້ ຂ້າພະເຈົ້າ ຂໍຮັບຜິດຊອບຕໍ່ໜ້າກົດໝາຍທຸກປະການ.

ເຮັດທີ່..............ວັນທີ..............

ຢັ້ງຢືນຈາກ ອົງການປົກຄອງ
ທ້ອງຖິ່ນ ທາງຣະບານ.

ຜູ້ຮ້ອງຂໍ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

+++++++++++++

ຫ້ອງການ ການຄ້າເມືອງ
( ຊື່ເມືອງ.....................)

ເລກທີ............/
( ເອກະສານຊ້ອນທ້າຍ: ໑ )

# ໃບອະນຸຍາດ

## ຄ້າ - ຂາຍ ຢູ່ຕະຫລາດຊາຍແດນ ລາວ - ຫວຽດນາມ

1. ອອກໃຫ້ : ຊື່ ແລະ ນາມສະກຸນ :..........................................
ສັນຊາດ :..........................ອາຍຸ :....................ຫລື ຊື່ຂອງຫົວໜ່ວຍທຸລະກິດ
ບຸກຄົນ ຫລື ນິຕິບຸກຄົນ :..........................ສັນຊາດ :....................
2. ບ່ອນຢູ່ ( ຫລື ທີ່ຕັ້ງ ສຳນັກງານໃຫຍ່ ຂອງຫົວໜ່ວຍທຸລະກິດ ) ....................
- Tele :..........................................
- ໂທລະສັບ :..........................................
- Fax :..........................................
3. ທຶນປະກອບ ໃນຕະຫລາດຊາຍແດນ :..........................................
4. ຊື່ຕະຫລາດຊາຍແດນ ( ບ່ອນທີ່ ອະນຸຍາດ ໃຫ້ ) :..........................................
5. ປະເພດສິນຄ້າ ທີ່ໄດ້ຮັບອະນຸຍາດ ໃຫ້ ຄ້າ - ຂາຍ :..........................................
..........................................................................................
6. ດ່ານທີ່ອະນຸຍາດໃຫ້ ນຳສິນຄ້າຜ່ານ ເຂົ້າ - ອອກ :..........................................

ໃບອະນຸຍາດ ຄ້າ - ຂາຍ ສະບັບນີ້ ມີກຳນົດນຳໃຊ້ເຖິງ :.......................... ກ່ອນໝົດກຳນົດນຳໃຊ້ນີ້ ຕ້ອງມາສະເໜີ ແຈ້ງໃນຫ້ອງການ ການຄ້າເມືອງ ພາຍໃນ 1 ເດືອນ ເພື່ອຂໍຕໍ່ອາຍຸນຳໃຊ້.

ວັນທີ, ເດືອນ, ປີ..........................
ຫົວໜ້າ ຫ້ອງການ ການຄ້າເມືອງ (ຊື່ເມືອງ).

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

===============

ຫ້ອງການ ການຄ້າເມືອງ
( ຊື່ເມືອງ ..................)

( ເອກະສານຊ້ອນທ້າຍ : ຄ )
ເລກທີ............../

# ບົດສະຫລຸບ

ລາຍງານສະພາບ ຕະຫລາດຊາຍແດນ.................
( ໄລຍະແຕ່.................ເຖິງ.........................)

I ລາຍງານດ້ານຂໍ້ມູນ, ສະຖິຕິ.

1. ຈຳນວນຮ້ານຄ້າ ຂາຍເຄື່ອງ :..............................................ໃນປີ ຈຳນວນຮ້ານຄ້າ ຂອງລາວ ມີ :.........................................ແລະ ຕ່າງປະເທດ ມີ :...................................

2. ສິນຄ້າ ຜ່ານດ່ານຊາຍແດນ ເຂົ້າມາຂາຍ ຢູ່ຕະຫລາດຊາຍແດນຂອງລາວ ( ຂາເຂົ້າ )

| ລາຍການສິນຄ້າ | ຫົວໜ່ວຍວັດແທກ | ຈຳນວນ | ມູນຄ່າ ( ກີບ ) | ດ່ານນຳເຂົ້າ | ໝາຍເຫດ |
|---|---|---|---|---|---|
| ມູນຄ່າລວມຍອດໃນນີ້:<br>1. | | | | | |

3. ສິນຄ້າ ຊື້ຈາກຕະຫລາດຊາຍແດນລາວ ຜ່ານດ່ານຊາຍແດນອອກ ( ຂາອອກ )

| ລາຍການສິນຄ້າ | ຫົວໜ່ວຍວັດແທກ | ຈຳນວນ | ມູນຄ່າ ( ກີບ ) | ດ່ານນຳອອກ | ໝາຍເຫດ |
|---|---|---|---|---|---|
| ມູນຄ່າລວມຍອດໃນນີ້:<br>1. | | | | | |

4. ມູນຄ່າພາສີ :.................................ກີບ.
ມູນຄ່າອາກອນ :...........................ກີບ.

II ສະຫລຸບ ສັງລວມເນື້ອຫາ ສະພາບຕະຫລາດຊາຍແດນໂດຍລວມ (ດ້ານເດັ່ນໜ້າ,ດ້ານຫຍໍ້ທໍ້,ສາເຫດ ແລະ ບົດຮຽນຕ່າງໆ ).

ວັນທີ,ເດືອນ,ປີ.........................
ຫົວໜ້າຫ້ອງການ ການຄ້າເມືອງ ( ຊື່ເມືອງ ).

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

( ເອກະສານຊ້ອນທ້າຍ ໓ )

## ຕາຕະລາງຕິດຕາມ ການຊື້ - ຂາຍ ສິນຄ້າ ໃນຕະຫຼາດຊາຍແດນ

| ວັນທີ | ຊື່ນາຍຈ້າງທະບຽນນາມ ຜູ້ ຂາຍອອກຈາກລາວ | ລາຍການສິນຄ້າ | ຈຳນວນ | ມູນຄ່າ ( ກີບ ) | ເງິນເສັຍພາສີ-ອາກອນ ( ກີບ ) | ຄ່າທຳນຽມທາງພະນັກງານເອົາເກັບ (ບໍ່) ພາສີ - ອາກອນ |
|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 |
| | | | | | | |

ໝາຍເຫດ :

1. ນັບແຕ່ຫ້ອງທີ 1 - 6 ໃຫ້ຫົວໜ່ວຍທຸລະກິດ ຮ້ານຄ້າຕ່າງໆປະກອບຂໍ້ມູນ ຂອງຕົນໃສ່.
2. ຊື່ ຂອງບຸກຄົນ ຫລື ຫົວໜ່ວຍທຸລະກິດ ຮ້ານຄ້າທີ່ປະກອບຂໍ້ມູນໃສ່ຕາຕະລາງ : ..............................
..............................................................................................................
3. ຊື່ ຂອງພະນັກງານພາສີ - ອາກອນ ທີ່ກວດກາ ຄວາມຖືກຕ້ອງຂອງຕາຕະລາງ : ..............................
..............................................................................................................

( ເອກະສານ[illegible] )

ລາຍຊື່ ຕະຫລາດຊາຍແດນ ທີ່ລັດຖະບານລາວ ແລະ ຫວຽດນາມ ໄດ້ຕົກລົງເຫັນດີ ເປີດເປັນທາງການ ປະກອບດ້ວຍ 11 ຈຸດດັ່ງນີ້ :

| | ເບື້ອງລາວ | ເບື້ອງຫວຽດນາມ |
|---|---|---|
| 1./ | ສົບຫຸ້ນ | ໄທຈາງ |
| 2./ | ສົບເປົາ | ປາຫ່າງ |
| 3./ | ບ້ານດານ | ນຽງເລືອງ |
| 4./ | ບ້ານເລີ | ນາແມວ |
| 5./ | ນ້ຳກັນ | ນ້ຳກັ່ນ |
| 6./ | ນ້ຳພາວ | ເກົ່າແຈວ |
| 7./ | ທົ່ງຊາມ | ຈະລໍ |
| 8./ | ບ້ານແດນສະຫວັນ | ລາວບາວ |
| 9./ | ປາງເປັນ | ເປີຣ |
| 10./ | ພູປາງ | ອາເຍື່ອຣ |
| 11./ | ດັກຈຶງ | ດັກຈຶງ ເປືອງຢາງ. |